ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 245 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 03. 07. 2018

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຕ້ານການຄ້າມະນຸດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ສະບັບເລກທີ 73/ສພຊ, ລົງວັນທີ 17 ທັນວາ 2015;
- ອີງຕາມໜັງສືສະເໜີ ສະບັບເລກທີ 005/ຄຕມຊ, ລົງວັນທີ 12 ມີນາ 2018 ຂອງຄະນະກາມະການຕ້ານການຄ້າມະນຸດລະດັບຊາດ;
- ອີງຕາມໜັງສືສະເໜີ ສະບັບເລກທີ 118/ພນ, ລົງວັນທີ 04 ພຶດສະພາ 2018 ຂອງກະຊວງພາຍໃນ.

**ນາຍົກລັດຖະມົນຕີ ອອກດຳລັດ:**

## ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຄະນະກຳມະການຕ້ານການຄ້າມະນຸດ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ໃຫ້ເປັນລະບົບ, ຖືກຕ້ອງ, ມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດ, ຊີວິດ, ສຸຂະພາບ, ກຽດສັກສີ, ເສລີພາບ ຂອງພົນລະເມືອງ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ຄະນະກຳມະການຕ້ານການຄ້າມະນຸດ**

ຄະນະກຳມະການຕ້ານການຄ້າມະນຸດ ແມ່ນການຈັດຕັ້ງຂອງລັດ ທີ່ບໍ່ປະຈຳການ ຊຶ່ງປະກອບດ້ວຍ:

1. ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ;
2. ຄະນະກຳມະການຕ້ານການຄ້າມະນຸດແຂວງ, ນະຄອນຫຼວງ;
3. ຄະນະກຳມະການຕ້ານການຄ້າມະນຸດ ເມືອງ, ເທດສະບານ, ນະຄອນ.

ມາດຕາ 3 ທີ່ຕັ້ງ ແລະ ພາລະບົດບາດ

1. **ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຂຽນເປັນຕົວອັກສອນຫຍໍ້ ວ່າ: "ຄຕມຊ" ແມ່ນການຈັດຕັ້ງໜຶ່ງ ຂອງລັດຖະບານ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ລັດຖະບານ ໃນການຊີ້ນຳ, ຕິດຕາມ, ກວດກາ, ຊຸກຍູ້ບັນດາກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການຕ້ານການຄ້າມະນຸດ; ໂຄສະນາ, ຂົນຂວາຍ, ຍາດແຍ່ງທຶນຮອນ ແລະ ເຕັກນິກວິຊາການ; ເປັນໃຈກາງໃນການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ໃນການປະຕິບັດວຽກງານຕ້ານການຄ້າມະນຸດ ຂອງ ສປປ ລາວ.

2. **ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ**

ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ ຂຽນເປັນຕົວອັກສອນຫຍໍ້ວ່າ: "ຄຕມຂ,ຄຕມ.ນວ" ແມ່ນການຈັດຕັ້ງໜຶ່ງ ຂອງແຂວງ, ນະຄອນຫຼວງ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໃນການຈັດຕັ້ງຜັນຂະຫຍາຍແຜນຍຸດທະສາດ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານຕ້ານການຄ້າມະນຸດ; ເປັນໃຈກາງໃນການພົວພັນປະສານສົມທົບ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

3. **ຄະນະກຳມະການຕ້ານການຄ້າມະນຸດ ເມືອງ, ເທດສະບານ, ນະຄອນ**

ຄະນະກຳມະການຕ້ານການຄ້າມະນຸດເມືອງ, ເທດສະບານ, ນະຄອນ ຂຽນເປັນຕົວອັກສອນຫຍໍ້ວ່າ: "ຄຕມມ, ຄຕມທ, ຄຕມນ" ແມ່ນການຈັດຕັ້ງໜຶ່ງ ຂອງເມືອງ, ເທດສະບານ, ນະຄອນ ທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ຄະນະກຳມະການຕ້ານການຄ້າມະນຸດແຂວງ, ນະຄອນຫຼວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນງານ, ໂຄງການ ແລະ ກິດຈະກຳ ກ່ຽວກັບວຽກງານຕ້ານການຄ້າມະນຸດ; ເປັນໃຈກາງໃນການພົວພັນປະສານສົມທົບ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ2
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 4 ໜ້າທີ່

1. **ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ມີໜ້າທີ່ ດັ່ງນີ້:**
   1) ປະຕິບັດນິຕິກຳຂອງ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ປະທານປະເທດ ແລະ ລັດຖະບານ ວາງອອກຢ່າງເຂັ້ມງວດ;
   2) ຄົ້ນຄວ້າຮ່າງນະໂຍບາຍ, ສ້າງແຜນຍຸດທະສາດ, ນິຕິກຳ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານຕ້ານການຄ້າມະນຸດ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາອະນຸມັດ;
   3) ຄົ້ນຄວ້າສົນທິສັນຍາ, ສັນຍາ, ອະນຸສັນຍາ, ຖະແຫຼງການ ແລະ ເອກະສານອື່ນຂອງສາກົນ ທີ່ກ່ຽວກັບວຽກງານຕ້ານການຄ້າມະນຸດ ເພື່ອນຳສະເໜີລັດຖະບານ ພິຈາລະນາລົງນາມ, ຮັບຮອງ, ໃຫ້ສັດຕະຍາບັນ, ເຂົ້າເປັນພາຄີ, ຖອນຕົວ ຫຼື ຍົກເລີກ;
   4) ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ, ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການກ່ຽວກັບວຽກງານຕ້ານການຄ້າ

ມະນຸດ ໃນແຕ່ລະໄລຍະ ໃຫ້ແກ່ລັດຖະບານ; ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ ກ່ຽວກັບວຽກງານຕ້ານການຄ້າມະນຸດ ເພື່ອສະເໜີລັດຖະບານ ພິຈາລະນາຮັບຮອງ ແລະ ລາຍງານຕໍ່ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ ຕາມລະບຽບການ;

5) ຄົ້ນຄວ້າ, ປະກອບຄຳເຫັນໃສ່ບັນດາແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ລວມທັງການພິຈາລະນາຮັບຮອງເອົາສົນທິສັນຍາ ແລະ ສັນຍາສາກົນ ໃນລະດັບພາກພື້ນ ແລະ ສາກົນກ່ຽວກັບວຽກງານຕ້ານການຄ້າມະນຸດ;
6) ໂຄສະນາ, ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ, ສະໜອງຂໍ້ມູນຂ່າວສານ, ຜະລິດສື່ໂຄສະນາ, ສ້າງຂະບວນການດ້ວຍຫຼາຍຮູບການ ກ່ຽວກັບວຽກງານຕ້ານການຄ້າມະນຸດ ໃຫ້ພາກສ່ວນຕ່າງໆ ຢູ່ພາຍໃນ, ຕ່າງປະເທດ, ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດ ຢ່າງກວ້າງຂວາງ;
7) ສ້າງລະບົບຖານຂໍ້ມູນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ເພື່ອນຳໃຊ້ໃນການສຶກສາ, ຄົ້ນຄວ້າ, ວາງນະໂຍບາຍ ແລະ ມາດຕະການແກ້ໄຂ ຢ່າງເໝາະສົມ;
8) ໃຫ້ການປົກປ້ອງ, ຊ່ວຍເຫຼືອອັນຈຳເປັນ ແກ່ຜູ້ຖືກເຄາະຮ້າຍ ລວມທັງນຳສົ່ງເຂົາເຈົ້າກັບຄືນສູ່ຄອບຄົວ ແລະ ສັງຄົມ ຢ່າງປອດໄພ ພ້ອມທັງສ້າງເງື່ອນໄຂ ເພື່ອບໍ່ໃຫ້ເຂົາເຈົ້າກັບຄືນເປັນຜູ້ຖືກເຄາະຮ້າຍອີກ;
9) ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ;
10) ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຕາມການອະນຸມັດ;
11) ສະຫຼຸບລາຍງານ ກ່ຽວກັບການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ ໃຫ້ລັດຖະບານ ເປັນແຕ່ລະໄລຍະ;
12) ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

2. ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ ມີໜ້າທີ່ ດັ່ງນີ້:
   1) ຈັດຕັ້ງຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ, ແຜນງານ, ແຜນການ, ໂຄງການຂອງລັດຖະບານ, ຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ແລະ ແຂວງ, ນະຄອນຫຼວງ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
   2) ຄົ້ນຄວ້າ, ເຊື່ອມຊຶມ ເນື້ອໃນບັນດາສົນທິສັນຍາ ແລະ ສັນຍາສາກົນອື່ນ ທີ່ພົວພັນກັບວຽກງານຕ້ານການຄ້າມະນຸດ ທີ່ ສປປ ລາວ ເປັນພາຄີ ເປັນຕົ້ນອານຸສັນຍາ ວ່າດ້ວຍການສະກັດກັ້ນ, ປາບປາມ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ;
   3) ປະກອບຄຳເຫັນໃສ່ນະໂຍບາຍ, ກົດໝາຍ, ລະບຽບການ ຂອງລັດ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
   4) ຄົ້ນຄວ້າ, ສ້າງ, ປັບປຸງ ແຜນງານ, ແຜນການ, ໂຄງການ ແລະ ງົບປະມານ ກ່ຽວກັບວຽກງານຕ້ານການຄ້າມະນຸດໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງທ້ອງຖິ່ນຕົນ ໃນແຕ່ລະໄລຍະ;
   5) ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ, ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານຕ້ານການຄ້າມະນຸດ ໃຫ້ປະຊາຊົນ, ພາກສ່ວນຕ່າງໆ ຢູ່ໃນແຂວງ, ນະຄອນຫຼວງ ຮັບຮູ້, ເຂົ້າໃຈ, ມີສະຕິ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຢ່າງກວ້າງຂວາງ;
   6) ເກັບກຳ, ສັງລວມສະຖິຕິ, ຂໍ້ມູນກ່ຽວກັບວຽກງານຕ້ານການຄ້າມະນຸດ ເພື່ອເປັນຂໍ້ມູນ ໃນການຄົ້ນຄວ້າ ແລະ ວາງມາດຕະການແກ້ໄຂ ຢ່າງເໝາະສົມ;

7) ໃຫ້ການປົກປ້ອງ, ຊ່ວຍເຫຼືອອັນຈຳເປັນແກ່ຜູ້ຖືກເຄາະຮ້າຍ ຢູ່ ແຂວງ, ນະຄອນຫຼວງ ລວມທັງນຳສົ່ງເຂົາເຈົ້າກັບຄືນສູ່ຄອບຄົວ ແລະ ສັງຄົມ ຢ່າງປອດໄພ ພ້ອມທັງສ້າງເງື່ອນໄຂ ເພື່ອບໍ່ໃຫ້ເຂົາເຈົ້າກັບຄືນເປັນຜູ້ຖືກເຄາະຮ້າຍອີກ;

8) ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ທ້ອງຖິ່ນຕົນ ລວມທັງພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ;

9) ພົວພັນ, ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຕາມການອະນຸມັດ;

10) ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ຢູ່ແຂວງ, ນະຄອນຫຼວງ ໃນແຕ່ລະໄລຍະ ໃຫ້ແກ່ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຢ່າງເປັນປົກກະຕິ ແລະ ທັນເວລາ;

11) ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

3. **ຄະນະກຳມະການຕ້ານການຄ້າມະນຸດ ເມືອງ, ເທດສະບານ, ນະຄອນ ມີໜ້າທີ່ ດັ່ງນີ້:**

1) ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ນິຕິກຳ, ແຜນງານ, ແຜນການ, ໂຄງການຂອງລັດຖະບານ, ຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ, ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ ແລະ ເມືອງ, ເທດສະບານ, ນະຄອນ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

2) ຄົ້ນຄວ້າ, ເຊື່ອມຊຶມ ເນື້ອໃນບັນດາສົນທິສັນຍາ ແລະ ສັນຍາສາກົນອື່ນ ທີ່ພົວພັນກັບວຽກງານຕ້ານການຄ້າມະນຸດ ທີ່ ສປປ ລາວ ເປັນພາຄີ ເປັນຕົ້ນອານຸສັນຍາ ວ່າດ້ວຍການສະກັດກັ້ນ, ປາບປາມ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ;

3) ປະກອບຄຳເຫັນໃສ່ນະໂຍບາຍ, ກົດໝາຍ, ລະບຽບການຂອງລັດ ກ່ຽວກັບວຽກງານຕ້ານການຄ້າມະນຸດ;

4) ຄົ້ນຄວ້າ, ສ້າງ, ປັບປຸງ ແຜນງານ, ແຜນການ, ໂຄງການ ແລະ ງົບປະມານ ກ່ຽວກັບວຽກງານຕ້ານການຄ້າມະນຸດ ໃຫ້ສອດຄ່ອງກັບສະພາບຕົວຈິງ ຂອງທ້ອງຖິ່ນຕົນ ໃນແຕ່ລະໄລຍະ;

5) ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນຍຸດທະສາດ, ແຜນງານ ແລະ ໂຄງການ, ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານຕ້ານການຄ້າມະນຸດ ໃຫ້ປະຊາຊົນ, ພາກສ່ວນຕ່າງໆ ຢູ່ໃນເມືອງ, ເທດສະບານ, ນະຄອນ ຮັບຮູ້, ເຂົ້າໃຈ, ມີສະຕິ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງກວ້າງຂວາງ;

6) ເກັບກຳ, ສັງລວມ ສະຖິຕິ, ຂໍ້ມູນກ່ຽວກັບວຽກງານຕ້ານການຄ້າມະນຸດ ເພື່ອເປັນຂໍ້ມູນ ໃນການຄົ້ນຄວ້າ ແລະ ວາງມາດຕະການແກ້ໄຂ ຢ່າງເໝາະສົມ;

7) ໃຫ້ການປົກປ້ອງ, ຊ່ວຍເຫຼືອອັນຈຳເປັນ ແກ່ຜູ້ຖືກເຄາະຮ້າຍຢູ່ເມືອງ, ເທດສະບານ, ນະຄອນ ລວມທັງນຳສົ່ງເຂົາເຈົ້າກັບຄືນສູ່ຄອບຄົວ ແລະ ສັງຄົມ ຢ່າງປອດໄພ ພ້ອມທັງສ້າງເງື່ອນໄຂ ເພື່ອບໍ່ໃຫ້ເຂົາເຈົ້າກັບຄືນເປັນຜູ້ຖືກເຄາະຮ້າຍອີກ;

8) ຈັດ ແລະ ເຂົ້າຮ່ວມກອງປະຊຸມ, ສຳມະນາ, ຝຶກອົບຮົມ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ທ້ອງຖິ່ນຕົນ ລວມທັງພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ;

9) ພົວພັນ, ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຕາມການອະນຸມັດ;

10. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ຢູ່ເມືອງ, ເທດສະບານ, ນະຄອນ ໃນແຕ່ລະໄລຍະ ໃຫ້ແກ່ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ ແລະ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ ແລະ ທັນເວລາ;
11. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 5 ຂອບເຂດສິດ**

1. **ຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ມີສິດ ດັ່ງນີ້:**
   1) ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການ ເພື່ອຈັດຕັ້ງປະຕິບັດກົດໝາຍ, ມະຕິຄຳສັ່ງ ແລະ ນິຕິກຳ ຂອງລັດຖະບານ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
   2) ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ;
   3) ຮຽກເຊີນພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມກອງປະຊຸມ ເພື່ອປຶກສາ ແລະ ຄົ້ນຄວ້າ ແກ້ໄຂບັນຫາ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
   4) ຈັດກອງປະຊຸມຄົບຄະນະສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
   5) ເລັ່ງທວງໃຫ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ ເພື່ອລາຍງານ ແລະ ຕອບສະໜອງຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບວຽກງານຕ້ານການຄ້າມະນຸດ;
   6) ຂຶ້ນແຜນງົບປະມານ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານປະຈຳປີ, ທຶນຊ່ວຍເຫຼືອ, ພາຫະນະ, ອຸປະກອນຮັບໃຊ້ຕ່າງໆ ທີ່ຢູ່ໃນການຄຸ້ມຄອງ ເຂົ້າໃນວຽກງານຕ້ານການຄ້າມະນຸດຢ່າງ ມີປະສິດທິຜົນ;
   7) ພົວພັນ, ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອແລກປ່ຽນບົດຮຽນ, ວິຊາການ ແລະ ຍາດແຍ່ງການຊ່ວຍເຫຼືອທາງດ້ານທຶນຮອນ ເຂົ້າໃນວຽກງານຕ້ານການຄ້າມະນຸດ;
   8) ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

2. **ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ ມີສິດ ດັ່ງນີ້:**
   1) ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ແຂວງ, ນະຄອນຫຼວງ;
   2) ຊີ້ນຳ, ນຳພາ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງຄະນະກຳມະການຕ້ານການຄ້າມະນຸດ ເມືອງ, ເທດສະບານ, ນະຄອນ;
   3) ຮຽກເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເຂົ້າຮ່ວມປະຊຸມ ເພື່ອປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂບັນຫາຕ່າງໆ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
   4) ເລັ່ງທວງໃຫ້ບັນດາພະແນກການ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດຂອງແຂວງ, ນະຄອນຫຼວງ ເພື່ອລາຍງານ ແລະ ຕອບສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
   5) ຈັດກອງປະຊຸມຄົບຄະນະສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ;
   6) ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ທຶນ ທີ່ໄດ້ຮັບຈາກການຊ່ວຍເຫຼືອ, ພາຫະນະ, ອຸປະກອນຮັບໃຊ້ຕ່າງໆ ເຂົ້າໃນວຽກງານຕ້ານການຄ້າມະນຸດ ໃຫ້ຖືກຕ້ອງ, ມີປະສິດທິຜົນ;
   7) ເຄື່ອນໄຫວແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ;

8) ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຕາມການອະນຸມັດ;
9) ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

3. **ຄະນະກຳມະການຕ້ານການຄ້າມະນຸດນະຄອນ, ເທດສະບານ, ເມືອງມີສິດ ດັ່ງນີ້:**
1) ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ນະຄອນ, ເທດສະບານ, ເມືອງ;
2) ຮຽກເຊີນພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເຂົ້າຮ່ວມປະຊຸມເພື່ອປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂບັນຫາຕ່າງໆ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
3) ຈັດກອງປະຊຸມຄົບຄະນະສະໄໝສາມັນ, ວິສາມັນ, ສະຫຼຸບ ແລະ ຖອດຖອນບົດຮຽນ ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ;
4) ເລັ່ງທວງໃຫ້ບັນດາຫ້ອງການ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ ຂອງນະຄອນ, ເທດສະບານ, ເມືອງ ລາຍງານ ແລະ ຕອບສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານຕ້ານການຄ້າມະນຸດ;
5) ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ທຶນ ທີ່ໄດ້ຮັບຈາກການຊ່ວຍເຫຼືອ, ພາຫະນະ, ອຸປະກອນຮັບໃຊ້ຕ່າງໆ ເຂົ້າໃນວຽກງານຕ້ານການຄ້າມະນຸດ ໃຫ້ຖືກຕ້ອງ, ມີປະສິດທິຜົນ;
6) ເຄື່ອນໄຫວແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດ;
7) ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຕາມການອະນຸມັດ;
8) ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

## ໝວດທີ3
## ໂຄງປະກອບການຈັດຕັ້ງ

**ມາດຕາ 6 ໂຄງປະກອບກົງຈັກ**

1. **ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ມີກອງເລຂາເປັນກົງຈັກຊ່ວຍວຽກ ໂດຍຖືເອົາກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຂອງກົມໃຫຍ່ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ ເປັນຫ້ອງການ.

2. **ຄະນະກຳມະການຕ້ານການຄ້າມະນຸດ ນະຄອນຫຼວງ, ແຂວງ**

ຄະນະກຳມະການຕ້ານການຄ້າມະນຸດນະຄອນຫຼວງ, ແຂວງມີກອງເລຂາເປັນກົງຈັກຊ່ວຍວຽກ ໂດຍຖືເອົາພະແນກຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຂອງຫ້ອງຕຳຫຼວດກອງບັນຊາການ ປກສນະຄອນຫຼວງ, ແຂວງ ເປັນຫ້ອງການ.

3. **ຄະນະກຳມະການຕ້ານການຄ້າມະນຸດ ເມືອງ, ເທດສະບານ, ນະຄອນ.**

ຄະນະກຳມະການຕ້ານການຄ້າມະນຸດນະຄອນ, ເທດສະບານ, ເມືອງມີກອງເລຂາເປັນກົງຈັກຊ່ວຍວຽກ ໂດຍຖືເອົາກອງຄະດີ ຂອງພະແນກຕຳຫຼວດກອງບັນຊາການ ປກສນະຄອນ, ເທດສະບານ, ເມືອງເປັນຫ້ອງການ.

ສຳລັບບັນດາຂະແໜງການ ທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດ ຕາມທີ່ກຳນົດໄວ້ ໃນມາດຕາ 61 ຂອງ ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ ແມ່ນໃຫ້ແຕ່ງຕັ້ງພະນັກງານ-ລັດຖະກອນ ຈາກພາກສ່ວນທີ່ກ່ຽວຂ້ອງ ຄື: ຂັ້ນສູນກາງ 3-4 ທ່ານ, ຂັ້ນແຂວງ 2-3 ທ່ານ ແລະ ຂັ້ນເມືອງ 1-2 ທ່ານ ເພື່ອເປັນເສນາທິການ ໃຫ້ແກ່ຄະນະກຳມະການຕ້ານການຄ້າມະນຸດ ຂອງຂະແໜງການຕົນ ໃນການປະສານງານ, ຄົ້ນຄວ້າ, ປະກອບຄຳເຫັນ, ສັງລວມ, ລາຍງານ ແລະ ເຂົ້າຮ່ວມເຄື່ອນໄຫວວຽກງານຕ້ານການຄ້າມະນຸດ.

ມາດຕາ 6 ໂຄງປະກອບບຸກຄະລາກອນ

1. ຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:
   1) ທ່ານຮອງນາຍົກລັດຖະມົນຕີ ເປັນປະທານ;
   2) ທ່ານລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ ແລະ ຜູ້ປະຈຳການ;
   3) ທ່ານຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;
   4) ທ່ານຮອງປະທານສູນກາງສະຫະພັນແມ່ຍິງລາວ ເປັນຮອງປະທານ;
   5) ທ່ານຮອງລັດຖະມົນຕີກະຊວງການຕ່າງປະເທດ ເປັນຮອງປະທານ;
   6) ທ່ານຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນກຳມະການ;
   7) ທ່ານຮອງລັດຖະມົນຕີກະຊວງຍຸຕິທຳ ເປັນກຳມະການ;
   8) ທ່ານຮອງລັດຖະມົນຕີກະຊວງສາທາລະນະສຸກ ເປັນກຳມະການ;
   9) ທ່ານຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ;
   10) ທ່ານຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
   11) ທ່ານຮອງເລຂາຄະນະບໍລິຫານງານ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;
   12) ທ່ານຮອງປະທານສູນກາງສະຫະພັນກຳມະບານລາວ ເປັນກຳມະການ;
   13) ທ່ານຮອງຫົວໜ້າກົມໃຫຍ່ຕຳຫຼວດ, ຜູ້ຊີ້ນຳວຽກງານຕ້ານການຄ້າມະນຸດ ເປັນກຳມະການ ແລະ ຫົວໜ້າກອງເລຂາ.

2. ຄະນະກຳມະການຕ້ານການຄ້າມະນຸດ ແຂວງ, ນະຄອນຫຼວງ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:
   1) ທ່ານຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນປະທານ;
   2) ທ່ານຫົວໜ້າກອງບັນຊາການ ປກສ ແຂວງ, ນະຄອນຫຼວງ ເປັນຮອງປະທານ ແລະ ທັງເປັນຜູ້ປະຈຳການ;
   3) ທ່ານຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;
   4) ທ່ານຮອງປະທານສະຫະພັນແມ່ຍິງ ແຂວງ, ນະຄອນຫຼວງ ເປັນຮອງປະທານ;
   5) ທ່ານຮອງຫົວໜ້າພະແນກການຕ່າງປະເທດ ເປັນຮອງປະທານ;
   6) ທ່ານຮອງຫົວໜ້າຫ້ອງວ່າການປົກຄອງ ແຂວງ, ນະຄອນຫຼວງ ເປັນກຳມະການ;
   7) ທ່ານຮອງຫົວໜ້າພະແນກຍຸຕິທຳ ເປັນກຳມະການ;
   8) ທ່ານຮອງຫົວໜ້າພະແນກສາທາລະນະສຸກ ເປັນກຳມະການ;
   9) ທ່ານຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນກຳມະການ;
   10) ທ່ານຮອງຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
   11) ທ່ານຮອງເລຂາຄະນະບໍລິຫານງານຊາວໜຸ່ມແຂວງ, ນະຄອນຫຼວງ ເປັນກຳມະການ;
   12) ທ່ານຮອງປະທານສະຫະພັນກຳມະບານ ແຂວງ, ນະຄອນຫຼວງ ເປັນກຳມະການ;
   13) ທ່ານຮອງຫົວໜ້າຫ້ອງຕຳຫຼວດ, ຜູ້ຊີ້ນຳວຽກງານຕ້ານການຄ້າມະນຸດ ເປັນກຳມະການ ແລະ ຫົວໜ້າກອງເລຂາ.

3. ຄະນະກຳມະການຕ້ານການຄ້າມະນຸດ ເມືອງ, ເທດສະບານ, ນະຄອນ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1) ທ່ານຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້ານະຄອນ ເປັນປະທານ;

2) ທ່ານຫົວໜ້າກອງບັນຊາການ ປກສ ເມືອງ, ເທດສະບານ,ນະຄອນ ເປັນຮອງປະທານ ແລະ ຜູ້ປະຈຳການ;

3) ທ່ານຮອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ;

4) ທ່ານຮອງປະທານສະຫະພັນແມ່ຍິງເມືອງ, ເທດສະບານ, ນະຄອນ ເປັນຮອງປະທານ;

5) ທ່ານຮອງຫົວໜ້າຫ້ອງວ່າການປົກຄອງເມືອງ, ເທດສະບານ, ນະຄອນ ເປັນກຳມະການ;

6) ທ່ານຮອງຫົວໜ້າຫ້ອງການຍຸຕິທຳ ເປັນກຳມະການ;

7) ທ່ານຮອງຫົວໜ້າຫ້ອງການສາທາລະນະສຸກ ເປັນກຳມະການ;

8) ທ່ານຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເປັນກຳມະການ;

9) ທ່ານຮອງຫົວໜ້າຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;

10) ທ່ານຮອງເລຂາຊາວໜຸ່ມເມືອງ, ເທດສະບານ, ນະຄອນ ເປັນກຳມະການ;

11) ທ່ານຮອງປະທານສະຫະພັນກຳມະບານເມືອງ, ເທດສະບານ, ນະຄອນ ເປັນກຳມະການ;

12) ທ່ານຮອງຫົວໜ້າພະແນກຕຳຫຼວດກອງບັນຊາການປກສເມືອງ, ເທດສະບານ, ນະຄອນ, ຜູ້ຊີ້ນຳກອງຄະດີ ເປັນກຳມະການ ແລະ ຫົວໜ້າກອງເລຂາ.

## ໝວດທີ4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

ຄະນະກຳມະການຕ້ານການຄ້າມະນຸດ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງເປັນໝູ່ຄະນະ ກ່ຽວກັບວຽກງານຂອງຄະນະກຳມະການຕ້ານການຄ້າມະນຸດ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງສະມາຊິກຄະນະກຳມະການຕ້ານການຄ້າມະນຸດ;
3. ທຸກການເຄື່ອນໄຫວ ຂອງຄະນະກຳມະການຕ້ານການຄ້າມະນຸດ ແລະ ພະນັກງານ-ລັດຖະກອນຊ່ວຍວຽກ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍ ໃຫ້ໄດ້ຮັບຜົນດີ.

### ມາດຕາ 8 ແບບແຜນວິທີເຮັດວຽກ

ຄະນະກຳມະການຕ້ານການຄ້າມະນຸດ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
2. ຄະນະກຳມະການຕ້ານການຄ້າມະນຸດ ເຄື່ອນໄຫວວຽກງານແບບບໍ່ປະຈຳການ, ຖືເອົາລະບອບປະຊຸມ, ສ່ອງແສງ, ລາຍງານ ປະຈຳໄຕມາດ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ເພື່ອເປັນການຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນສຳເລັດຂອງການຊີ້ນຳ-ນຳພາ ແລະ ວາງທິດທາງແຜນການເຄື່ອນໄຫວ ໃນແຕ່ລະໄລຍະ ພ້ອມທັງລາຍງານໃຫ້ລັດຖະບານ ເປັນປົກກະຕິ;

ໃນກໍລະນີຈຳເປັນ ຄະນະກຳມະການຕ້ານການຄ້າມະນຸດ ສາມາດເປີດກອງປະຊຸມວິສາມັນຂອງຄະນະຂຶ້ນເພື່ອພິຈາລະນາບັນຫາຮີບດ່ວນ. ການດຳເນີນກອງປະຊຸມຄົບຄະນະກຳມະການ ແຕ່ລະຄັ້ງ ຕ້ອງປະກອບດ້ວຍບຸກຄະລາກອນກາຍເຄິ່ງໜຶ່ງ ຂອງຄະນະກຳມະການຕ້ານການຄ້າມະນຸດ ຈຶ່ງສາມາດເປີດກອງປະຊຸມໄດ້;

3. ປະສານສົມທົບຢ່າງແໜ້ນແຟ້ນ ກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ແນໃສ່ໜູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຕ້ານການຄ້າມະນຸດ ໃຫ້ມີປະສິດທິຜົນ ແລະ ດີຂຶ້ນ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 9 ງົບປະມານ, ຕາປະທັບ ແລະ ເຄື່ອງໝາຍ

ຄະນະກຳມະການຕ້ານການຄ້າມະນຸດ ນຳໃຊ້ງົບປະມານຂອງລັດ, ການຊ່ວຍເຫຼືອ, ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ.

ຄະນະກຳມະການຕ້ານການຄ້າມະນຸດ ມີຕາປະທັບ ແລະ ເຄື່ອງໝາຍຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ ຊຶ່ງຈະມີພຽງແຕ່ຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ເທົ່ານັ້ນ ທີ່ມີເຄື່ອງໝາຍ.

### ມາດຕາ 10 ການຜັນຂະຫຍາຍ

1. ຄະນະກຳມະການຕ້ານການຄ້າມະນຸດ ໂດຍແມ່ນປະທານຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ເປັນເຈົ້າການ ໃນການຄົ້ນຄວ້າ ອອກຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ລະບຽບການ ເພື່ອຈັດຕັ້ງຜັນຂະຫຍາຍ ດຳລັດສະບັບນີ້ ໃຫ້ລະອຽດຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ເຂົ້າໃນການປະຕິບັດວຽກງານ ໃຫ້ມີປະສິດ ທິພາບ ແລະ ປະສິດທິຜົນ.
2. ມອບໃຫ້ປະທານຄະນະກຳມະການຕ້ານການຄ້າມະນຸດ ລະດັບຊາດ ຊີ້ນຳໃນການແບ່ງວຽກ-ແບ່ງຄວາມຮັບຜິດຊອບພາຍໃນຄະນະ ໃຫ້ລະອຽດ, ພ້ອມທັງຊີ້ນຳການເຄື່ອນໄຫວຂອງຄະນະກຳມະການຕ້ານການຄ້າມະນຸດ ແຂວງ ແລະ ນະຄອນຫລວງ ຕາມໜ້າທີ່ ແລະ ຂອບເຂດສິດ ທີ່ໄດ້ກຳນົດໄວ້ ໃນມາດຕາ 4 ແລະ ມາດຕາ 5 ໃຫ້ໄດ້ຮັບຜົນດີ.
3. ມອບໃຫ້ບັນດາກະຊວງ, ອົງການກ່ຽວຂ້ອງ ແລະ ທ້ອງຖິ່ນ ແຕ່ງຕັ້ງຜູ້ຕາງໜ້າຂອງຕົນ ທີ່ຮັບຜິດຊອບວຽກງານດັ່ງກ່າວ ເພື່ອປະກອບເຂົ້າເປັນຄະນະ ຕາມທີ່ໄດ້ກຳນົດ ໃນມາດຕາ 6 ແລ້ວແຈ້ງໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ກະຊວງປ້ອງກັນຄວາມສະຫງົບ ເພື່ອຊາບ.

### ມາດຕາ 11 ການຈັດຕັ້ງປະຕິບັດ

ຄະນະກຳມະການຕ້ານການຄ້າມະນຸດ, ບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະ ບານ, ນະຄອນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 12 ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະຊີ້ນຳລະດັບຊາດ ຕ້ານການຄ້າມະນຸດ ສະບັບເລກທີ 156/ນຍ, ລົງວັນທີ 8 ກັນຍາ 2008.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ